


ໃນວັນທີ 24 ມັງກອນ 2014, ຢູ່ທີ່ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ມີພິທີມອບ-ຮັບ ເງິນຊ່ວຍເຫລືອ ຈຳນວນ 46 ລ້ານກວ່າກີບ ເພື່ອນຳໄປຊ່ວຍບັນເທົາທຸກຜູ້ປະສົບເຄາະຮ້າຍ ຈາກໄພນ້ຳຖ້ວມ ເມື່ອລະດູຝົນໃນປີ 2013 ທີ່ຜ່ານມາ ຢູ່ບັນດາແຂວງພາກເໜືອ ແລະ ພາກໃຕ້ຂອງລາວ; ເງິນຊ່ວຍເຫລືອຈຳນວນດັ່ງກ່າວ ໄດ້ຈາກການລະດົມທຶນຂອງ ພະນັກງານກະຊວງການຕ່າງປະເທດ ແລະ ການປະກອບສ່ວນຂອງ ພະນັກງານສະຖານທູດລາວ ປະຈຳຢູ່ຕ່າງປະເທດ ແລະ ຄົນເຊື້ອຊາດລາວ ທີ່ອາໄສຢູ່ ປະເທດແບນຊິກ, ອົດສະຕຣາລີ, ມຽນມາ, ຈີນ, ພຽງຢາງ, ເຊີແນວ, ບາງກອກ, ຮົງກົງ ແລະ ອື່ນໆ. ໂດຍການກ່າວມອບຂອງ ທ່ານ ນາງ ສູນທອນ ໄຊຍະຈັກ, ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ ແລະ ກ່າວຮັບໂດຍ ທ່ານ ນາງ ອ່ອນຈັນ ທຳມະວົງ, ລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ໃນໂອກາດນີ້, ທ່ານ ນາງ ອ່ອນຈັນ ທຳມະວົງ ໄດ້ສະແດງຄວາມຂອບໃຈ ຕໍ່ການຊ່ວຍເຫລືອຂອງພາກສ່ວນຕ່າງໆ ຊຶ່ງຖືວ່າແມ່ນການປະກອບສ່ວນອັນສຳຄັນ ໃນການບັນເທົາທຸກປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກເຫດການໄພພິບັດ; ເຖິງວ່າເຫດການດັ່ງກ່າວ ໄດ້ເກີດຂຶ້ນໃນລະດູຝົນຜ່ານມາແລ້ວກໍຕາມ ແຕ່ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນໃນໄລຍະຍາວ ຍັງມີຄວາມຈຳເປັນທີ່ຕ້ອງໄດ້ສືບຕໍ່ແກ້ໄຂໃຫ້ກັບຄືນສູ່ສະພາບ ປົກກະຕິ.